ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

===oo(000)oo===

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ..0442../ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ..06.ມີນາ 2013.

# ຂໍ້ຕົກລົງ ວ່າດ້ວຍ
# ການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ທີ II ຂອງອາຊຽນ (The Second ASEAN Self Certification Pilot Project)

- ອີງຕາມດຳລັດສະບັບເລກທີ 552/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ອີງຕາມໜັງສືຮັບຮອງການຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳກ່ຽວກັບການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ ສະບັບເລກທີ 32/ຫລບ.ກສສ, ລົງວັນທີ 10 ມັງກອນ 2013.
- ອີງຕາມໜັງສືສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 1392/ກຂອ, ລົງວັນທີ 28/02/2013

## ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ ດັ່ງນີ້ :

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ມີຈຸດປະສົງເພື່ອກຳນົດຫຼັກການ, ລະບຽບການຂອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ ແນໃສ່ເພື່ອຮັບປະກັນຄວາມຖືກຕ້ອງສອດຄ່ອງກັບລະບຽບການ ແລະ ຂັ້ນຕອນຂອງການຈັດຕັ້ງປະຕິບັດໂຄງການທົດ ລອງທີ II ຂອງອາຊຽນທີ່ໄດ້ກຳນົດໄວ້, ແລະພ້ອມດຽວກັນນັ້ນກໍ່ເພື່ອເປັນການຮັບປະກັນໃຫ້ການຈັດຕັ້ງປະຕິບັດໂຄງການດັ່ງກ່າວມີປະສິດທິຜົນສູງ.

**ມາດຕາ 2. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້ :

1. **ໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ** ໝາຍເຖິງ ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງຜູ້ຜະລິດ ແລະ ສົ່ງອອກດ້ວຍຕົນເອງເປັນການທົດລອງລະຫວ່າງບັນດາປະເທດທີ່ເຂົ້າຮ່ວມໂຄງການຂອງອາຊຽນໂດຍອີງໃສ່ລະບຽບການ ແລະ ອາຍຸການຂອງໂຄງການທີ່ໄດ້ກຳນົດໄວ້ ;

2. **ປະເທດສະມາຊິກ** ໝາຍເຖິງ ປະເທດທີ່ເຂົ້າຮ່ວມລົງນາມໃນບົດບັນທຶກຊ່ວຍຈຳ (MOU) ເພື່ອຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ;

3. **ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ** (Invoice Declaration) ໝາຍເຖິງ ໃບແຈ້ງລາຄາ/ອິນວອຍຂອງຜູ້ສົ່ງອອກທີ່ໄດ້ມີການລະບຸຂໍ້ຄວາມຢັ້ງຢືນແຫຼ່ງກຳເນີດຂອງສິນຄ້າ, ນຳໃຊ້ເປັນເອກະສານທາງການເພື່ອແຈ້ງຕໍ່ເຈົ້າໜ້າທີ່ພາສີພາຍໃນ ແລະ ຕ່າງປະເທດ ເພື່ອຮັບຊາບວ່າສິນຄ້າທີ່ລະບຸໄວ້ໃນໃບແຈ້ງລາຄາດັ່ງກ່າວແມ່ນມີແຫຼ່ງກຳເນີດຢູ່ໃນດິນແດນຂອງ ສປປ ລາວ, ຈຸດປະສົງແມ່ນເພື່ອຂໍນຳໃຊ້ສິດໃນການຫຼຸດຜ່ອນ ຫຼື ຍົກເວັ້ນພາສີນຳເຂົ້າພາຍໃຕ້ສັນຍາການຄ້າດ້ານຜະລິດຕະພັນ (ATIGA);

4. **ໃບຢັ້ງຢືນການເປັນຜູ້ສົ່ງອອກທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ** (Certificate of Certified Exporter) ໝາຍເຖິງ ໃບຢັ້ງຢືນການໄດ້ຮັບສິດຂອງຜູ້ສົ່ງອອກຈາກເຈົ້າໜ້າ ທີ່ກ່ຽວຂ້ອງຂອງລັດໃຫ້ແກ່ຜູ້ສົ່ງອອກທີ່ໄດ້ມາດຖານ ແລະ ເງື່ອນໄຂໃນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (ຕໍ່ໄປເອີ້ນຫຍໍ້ວ່າ "**ໃບຢັ້ງຢືນສິດ**");

5. **ເຈົ້າໜ້າທີ່ອອກໃບຢັ້ງຢືນສິດ** ໝາຍເຖິງ ກະຊວງ ອຸດສາຫະກຳ ແລະ ການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) ຫຼື ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ; ແລະ

6. **ຜູ້ສົ່ງອອກທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ** ໝາຍເຖິງ ຜູ້ຜະລິດ ແລະ ສົ່ງອອກສິນຄ້າທີ່ໄດ້ຮັບການມອບສິດຈາກເຈົ້າໜ້າທີ່ຢັ້ງຢືນ (ຕໍ່ໄປເອີ້ນຫຍໍ້ວ່າ "**ຜູ້ສົ່ງອອກທີ່ໄດ້ສິດ**").

**ມາດຕາ 3. ເງື່ອນໄຂຂອງການເປັນຜູ້ສົ່ງອອກທີ່ໄດ້ສິດ**

ຜູ້ທີ່ຕ້ອງການສະໝັກເປັນຜູ້ສົ່ງອອກທີ່ໄດ້ສິດຕ້ອງມີເງື່ອນໄຂ ດັ່ງນີ້ :

1. ເປັນບໍລິສັດ/ໂຮງງານທີ່ມີທະບຽນວິສາຫະກິດດຳເນີນທຸລະກິດການຜະລິດ ແລະ ສົ່ງອອກສິນຄ້າໂດຍຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ;

2. ມີປະຫວັດການດຳເນີນທຸລະກິດຈະແຈ້ງ, ປະຕິບັດພັນທະຕ່າງໆຕໍ່ລັດຄົບຖ້ວນ ແລະ ເປັນປົກກະຕິ ;

3. ມີປະສົບການໃນການຈັດຕັ້ງປະຕິບັດລະບຽບແຫຼ່ງກຳເນີດສິນຄ້າຂອງອາຊຽນ; ແລະ

4. ເປັນຜູ້ຜະລິດສິນຄ້າທີ່ສົ່ງອອກໄປຍັງຕະຫຼາດຂອງປະເທດສະມາຊິກທີ່ເຂົ້າຮ່ວມໂຄງການ.

**ມາດຕາ 4. ຂັ້ນຕອນຂອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ມີຂັ້ນຕອນດັ່ງຕໍ່ໄປນີ້:

1. ຜູ້ສົ່ງອອກທີ່ມີຈຸດປະສົງໄດ້ຮັບສິດເພື່ອຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕ້ອງຍື່ນໃບຄຳຮ້ອງ/ໃບສະເໜີພ້ອມດ້ວຍເອກະສານກ່ຽວຂ້ອງທີ່ຈຳເປັນຕໍ່ເຈົ້າໜ້າທີ່ອອກໃບຢັ້ງຢືນສິດ (ຮ່າງໃບສະເໜີຊ້ອນທ້າຍທີ 1) .

2. ເຈົ້າໜ້າທີ່ອອກໃບຢັ້ງຢືນສິດສົມທົບກັບຂະແໜງການກ່ຽວຂ້ອງ ພິຈາລະນາຄຳສະເໜີຂອງຜູ້ສົ່ງອອກໂດຍອີງໃສ່ມາດຖານ ແລະ ເງື່ອນໄຂທີ່ໄດ້ລະບຸໄວ້ໃນມາດຕາ 3 ຂ້າງເທິງ. ກໍລະນີເອກະສານຄົບຖ້ວນ ແລະ ຖືກຕ້ອງ, ເຈົ້າໜ້າທີ່ອອກໃບຢັ້ງຢືນສິດ ຈະອອກໃບຢັ້ງຢືນສິດໃຫ້ຜູ້ສະເໜີພາຍໃນກຳນົດ 03 ວັນລັດຖະການ. ຖ້າຈຳເປັນຕ້ອງມີການພິສູດຂັ້ນຕອນ ແລະ ຂະບວນການຜະລິດຂອງສິນຄ້າ ເວລາພິຈາລະນາອາດຈະແກ່ຍາວອອກໄປ ແຕ່ສູງສຸດຕ້ອງບໍ່ເກີນ 07 ວັນລັດຖະການ (ຮ່າງໃບຢັ້ງຢືນສິດຊ້ອນທ້າຍທີ 2);

3. ພາຍຫຼັງຜູ້ສົ່ງອອກໄດ້ຮັບສິດໃນການເປັນຜູ້ສົ່ງອອກທີ່ສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ, ກ່ອນຈະຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຜູ້ສົ່ງອອກຕ້ອງແຈ້ງແບບຢ່າງລາຍເຊັນຂອງຜູ້ທີ່ໄດ້ຮັບການມອບສິດລົງລາຍເຊັນໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໃຫ້ເຈົ້າໜ້າທີ່ອອກໃບຢັ້ງຢືນສິດຈຳນວນບໍ່ເກີນ 3 ລາຍເຊັນ/ຄົນ (ຮ່າງແຈ້ງແບບຢ່າງລາຍເຊັນຊ້ອນທ້າຍທີ 3) ;

4. ເມື່ອໄດ້ຮັບການແຈ້ງແບບຢ່າງລາຍເຊັນຂອງຜູ້ສົ່ງອອກທີ່ໄດ້ສິດ, ເຈົ້າໜ້າທີ່ອອກໃບຢັ້ງຢືນສິດຕ້ອງໄດ້ສົ່ງແບບຢ່າງລາຍເຊັນດັ່ງກ່າວໃຫ້ແກ່ປະເທດສະມາຊິກຂອງໂຄງການ ເພື່ອບັນທຶກເຂົ້າໃນຖານຂໍ້ມູນໄວ້ເປັນບ່ອນອີງໃນການກວດກາ ແລະ ພິຈາລະນາຫຼຸດຜ່ອນ ຫຼື ຍົກເວັ້ນພາສີນຳເຂົ້າ ; ແລະ

5. ພາຍຫຼັງໄດ້ຮັບການແຈ້ງຕອບຂອງປະເທດສະມາຊິກເຂົ້າຮ່ວມໂຄງການ ກ່ຽວກັບການໄດ້ຮັບແບບຢ່າງລາຍເຊັນຂອງຜູ້ສົ່ງອອກທີ່ໄດ້ສິດ, ເຈົ້າໜ້າທີ່ອອກໃບຢັ້ງຢືນສິດຈະແຈ້ງໃຫ້ຜູ້ສົ່ງອອກທີ່ໄດ້ສິດຮັບຊາບຢ່າງເປັນທາງການ ແລະ ເລີ່ມຈັດຕັ້ງປະຕິບັດ (ຮ່າງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຊ້ອນທ້າຍທີ 4).

**ມາດຕາ 5. ໜ້າທີ່ຂອງຜູ້ສົ່ງອອກທີ່ໄດ້ສິດ**

ຜູ້ສົ່ງອອກທີ່ໄດ້ສິດ ຕ້ອງປະຕິບັດໜ້າທີ່ດັ່ງນີ້ :

1. ປະຕິບັດຕາມລະບຽບ ແລະ ຂັ້ນຕອນຂອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕາມທີ່ໄດ້ກຳນົດໄວ້ໃນກອບຂອງໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນຢ່າງເຂັ້ມງວດ ;

2. ລາຍງານຕົວເລກການສົ່ງອອກສິນຄ້າພາຍໃຕ້ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໃຫ້ເຈົ້າໜ້າທີ່ອອກໃບຢັ້ງຢືນສິດຢ່າງເປັນປົກກະຕິ, ເດືອນ, ງວດ, 6 ເດືອນ ແລະ 1 ປີ; ແລະ

3. ຮ່ວມມືກັບເຈົ້າໜ້າທີ່ອອກໃບຢັ້ງຢືນສິດໃນການຊີ້ແຈງ, ອະທິບາຍຕໍ່ບັນຫາທີ່ເປັນການສົງໄສຂອງເຈົ້າໜ້າທີ່ກ່ຽວຂ້ອງຂອງລັດທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບຂະບວນການ ແລະ ຂັ້ນຕອນຂອງການຜະລິດສິນຄ້າ ພ້ອມທັງສະໜອງເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງຕ່າງໆ ເພື່ອເປັນບ່ອນອີງໃນການພິຈາລະນາແກ້ໄຂບັນຫາ.

**ມາດຕາ 6. ຂອບເຂດສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ຜູ້ສົ່ງອອກທີ່ໄດ້ສິດສາມາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໃຫ້ໄດ້ແຕ່ສະເພາະລາຍການສິນຄ້າທີ່ຕົນເອງຜະລິດ ແລະ ມີຄວາມສອດຄ່ອງກັບເງື່ອນໄຂຂອງລະບຽບແຫຼ່ງກຳເນີດສິນຄ້າຂອງອາຊຽນຕາມບັນຊີທີ່ໄດ້ແຈ້ງໃຫ້ເຈົ້າໜ້າທີ່ອອກໃບຢັ້ງຢືນສິດເທົ່ານັ້ນ. ຖ້າຫາກມີການຜະລິດເພີ່ມເຕີມສິນຄ້າຊະນິດໃໝ່ທີ່ບໍ່ມີໃນລາຍການ ຕ້ອງໄດ້ແຈ້ງໃຫ້ເຈົ້າໜ້າທີ່ຢັ້ງຢືນຊາບລ່ວງໜ້າ ເພື່ອດຳເນີນຂັ້ນຕອນຕາມລະບຽບການແລ້ວຈຶ່ງສາມາດສົ່ງອອກໄດ້.

**ມາດຕາ7. ມາດຕະການຕໍ່ຜູ້ສົ່ງອອກທີ່ໄດ້ສິດ**

ຜູ້ສົ່ງອອກທີ່ໄດ້ສິດ ຫາກມີການຝ່າຝືນຂໍ້ຕົກລົງສະບັບນີ້ ເຊັ່ນ : ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ບໍ່ໄດ້ເງື່ອນໄຂ, ແຈ້ງຂໍ້ມູນບໍ່ຖືກຕ້ອງຕາມຄວາມຈິງຕໍ່ເຈົ້າໜ້າທີ່ອອກໃບຢັ້ງຢືນສິດ, ຢັ້ງຢືນແຫຼ່ງກຳເນີດສິນຄ້າໃຫ້ຜູ້ອື່ນໂດຍທີ່ສິນຄ້າດັ່ງກ່າວບໍ່ໄດ້ຜະລິດຢູ່ພາຍໃນບໍລິສັດ ຫຼື ໂຮງງານຂອງຕົນ ແລະ ອື່ນໆ ເຮັດໃຫ້ເກີດມີຄວາມຫຍຸ້ງຍາກ ແລະ ມີຜົນກະທົບຕາມມາພາຍຫຼັງຈະຕ້ອງໄດ້ຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດດ້ວຍຕົນເອງ ແລະ ພ້ອມດຽວກັນນັ້ນ ກໍ່ຕ້ອງໄດ້ຮັບຜິດຊອບຕໍ່ລະບຽບການທັງພາຍໃນ ແລະ ຕ່າງປະເທດ ດັ່ງນີ້ :

**ຕໍ່ພາຍໃນປະເທດ**: ການກະທຳຜິດຄັ້ງທີ 1 ຈະໄດ້ຖືກຕັກເຕືອນ, ຂຽນບົດບັນທຶກຮັບຮູ້ຄວາມຜິດຂອງຕົນ, ແລະ ຄັ້ງທີ 2 ຈະຕ້ອງໄດ້ຖືກຕັກເຕືອນພ້ອມທັງປັບໃໝໃນອັດຕາສ່ວນ 50% ຂອງມູນຄ່າການສົ່ງອອກໃນແຕ່ລະຄັ້ງ, ຄັ້ງທີ 3 ປັບໃໝ 100% ພ້ອມທັງຖອນສິດໃນການເປັນຜູ້ມີສິດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ, ປະກອບສຳນວນເພື່ອນຳສະເໜີລຶບລ້າງໃນທະບຽນວິສາຫະກິດ.

ຕໍ່ຕ່າງປະເທດ: ຮັບຜິດຊອບໃຊ້ຈ່າຍຄ່າພາສີນຳເຂົ້າຍ້ອນຫຼັງ ແລະ ປະຕິບັດລະບຽບການອື່ນໆ ຂອງປະເທດຜູ້ນຳເຂົ້າກຳນົດໄວ້.

**ມາດຕາ 8. ການເກັບມ້ຽນເອກະສານ ແລະ ການຮັກສາຂໍ້ມູນ**

ຜູ້ສົ່ງອອກທີ່ໄດ້ສິດຈະຕ້ອງໄດ້ເກັບມ້ຽນເອກະສານທີ່ໃຊ້ເປັນຂໍ້ມູນໃນການຜະລິດ, ການສົ່ງອອກ, ການຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ອື່ນໆທີ່ກ່ຽວຂ້ອງໃຫ້ເປັນລະບົບພາຍໃນກຳນົດ 03 ປີ ເພື່ອເປັນຂໍ້ມູນອ້າງອີງໃນເວລາຖືກກວດສອບ ຫຼື ຊັກຖາມຄືນມາ ຍ້ອນມີຂໍ້ສົງໄສຈາກປະເທດນຳເຂົ້າ ຕາມທີ່ໄດ້ຕົກລົງກັນໄວ້ໃນລະບຽບການຂອງໂຄງການທົດລອງດັ່ງກ່າວ.

**ມາດຕາ 9. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການຈັດຕັ້ງປະຕິບັດໂດຍປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ແລະ ເຜີຍແຜ່ຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 10. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ